ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

************

ອົງການໄອຍະການປະຊາຊົນສູງສຸດ
ສານປະຊາຊົນສູງສຸດ
ກະຊວງປ້ອງກັນຄວາມສະຫງົບ

ເລກທີ 003../ອອປສ,ສປສສ,ປກສ
ນະຄອນຫຼວງວຽງຈັນ, ວັນທີ.12.ມີນາ 2015

# ຄຳແນະນຳຮ່ວມ

## ລະຫວ່າງ

## ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ກະຊວງປ້ອງກັນຄວາມສະຫງົບ ວ່າດ້ວຍການປ່ອຍຕົວນັກໂທດກ່ອນກຳນົດໂດຍມີເງື່ອນໄຂ

**ເຖິງ: ກົມກວດກາຄ້າຍຄຸມຂັງ - ດັດສ້າງ, ກົມຕຳຫຼວດຄຸມຂັງ - ດັດສ້າງ, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ກອງບັນຊາການ ປກສ ແຂວງ - ນະຄອນ ໃນທົ່ວປະເທດ.**

**ເລື່ອງ: ຈັດຕັ້ງປະຕິບັດການປ່ອຍຕົວນັກໂທດກ່ອນກຳນົດໂດຍມີເງື່ອນໄຂ.**

- ອີງຕາມ ມາດຕາ 52 ຂອງກົດໝາຍອາຍາ ສະບັບປັບປຸງປີ 2005;
- ອີງຕາມ ມາດຕາ 252, 253, 254 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2012.

ໃນໄລຍະຜ່ານມາເຫັນວ່າ ຫຼາຍແຂວງໄດ້ມີການຈັດຕັ້ງປະຕິບັດຖືກຕ້ອງຕາມມາດຕາ 52 ຂອງກົດໝາຍອາຍາ ສະບັບປັບປຸງ ປີ 2005, ມາດຕາ 252, 253 ແລະ 254 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012, ແຕ່ຍັງມີບາງແຂວງຍັງບໍ່ທັນໄດ້ຈັດຕັ້ງປະຕິບັດ ຫຼື ມີການຈັດຕັ້ງປະຕິບັດກໍບໍ່ທັນຖືກຕ້ອງ, ສອດຄ່ອງ ຕາມກົດໝາຍ ແລະ ບໍ່ເປັນເອກະພາບ.

ສະນັ້ນ, ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດການປ່ອຍຕົວນັກໂທດກ່ອນກຳນົດໂດຍມີເງື່ອນໄຂໃຫ້ມີຄວາມເປັນເອກະພາບ, ຖືກຕ້ອງ, ໂປ່ງໃສ ແລະ ຍຸຕິທຳ.

## ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ກະຊວງປ້ອງກັນຄວາມສະຫງົບ ອອກຄຳແນະນຳຮ່ວມ :

## I. ຈຸດປະສົງ

1. ແນໃສ່ຈັດຕັ້ງປະຕິບັດມາດຕາ 52 ຂອງກົດໝາຍອາຍາ ສະບັບປັບປຸງ ປີ 2005, ມາດຕາ 252, 253, 254 ຂອງກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2012 ໃຫ້ຖືກຕ້ອງຕາມພາລະບົດບາດ ຂອບເຂດສິດ, ໜ້າທີ່ ຂອງອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ເຈົ້າໜ້າທີ່ຄຸມຂັງ - ດັດສ້າງ ທີ່ກົດໝາຍໄດ້ກຳນົດໄວ້;
2. ເພື່ອໂຄສະນາເຜີຍແຜ່ແນວທາງນະໂຍບາຍດ້ານມະນຸດສະທຳທີ່ຖືກຕ້ອງ ເປັນທຳຂອງລັດຖະບານ ແຫ່ງ ສປປ ລາວ;
3. ເພື່ອສຶກສາອົບຮົມໃຫ້ນັກໂທດ ໄດ້ຮັບຮູ້ເຂົ້າໃຈນະໂຍບາຍອັນຖືກຕ້ອງເປັນທຳ ຂອງພັກ - ລັດ ເຮົາ, ຕັ້ງໜ້າຝຶກຝົນຫຼໍ່